ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 570 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 16.09.2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍ ການຮັບຮອງເອົາໂຄງປະກອບກົງຈັກ ແລະ ສະມາຊິກລັດຖະບານ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງສາທາລະນະສຸກ ສະບັບເລກທີ 0963/ສທ, ລົງວັນທີ 17 ສິງຫາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງສາທາລະນະສຸກ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານສາທາລະນະສຸກ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ.

ກະຊວງສາທາລະນະສຸກ ຂຽນເປັນຕົວອັກສອນຫຍໍ້ວ່າ: "ສທ" ຂຽນເປັນພາສາອັງກິດ: Ministry of Health "MoH" ແລະ ຂຽນເປັນພາສາຝຣັ່ງ: Ministère de la Santé "MDS" ແມ່ນກົງຈັກການຈັດຕັ້ງໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ດ້ານວຽກງານສາທາລະນະສຸກ, ຊີ້ນຳການກໍ່ສ້າງ ແລະ ບຳລຸງສ້າງບຸກຄະລາກອນຂະແໜງສາທາລະນະສຸກ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ໜ້າທີ່ ຂອງກະຊວງສາທາລະນະສຸກ ມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ, ຄຳສັ່ງ ແລະ ນິຕິກຳຂອງ ລັດຖະບານ ແລະ ນາຍົກລັດຖະມົນຕີ;
2. ຄົ້ນຄວ້າ ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານສາທາລະນະສຸກ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຄົ້ນຄວ້າ ຮ່າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳຂອງຂະແໜງສາທາລະນະສຸກ ເພື່ອສະເໜີຕໍ່ລັດຖະບານ;
4. ສົ່ງເສີມການ ຄົ້ນຄວ້າ, ເຜີຍແຜ່ ແລະ ນຳໃຊ້ ຜົນສຳເລັດດ້ານວິທະຍາສາດ ແລະ ເຕັກໂນໂລຊີ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນພື້ນຖານເຂົ້າໃນວຽກງານສາທາລະນະສຸກ;
5. ສະໜອງການບໍລິການ ດ້ານອະນາໄມ ແລະ ສົ່ງເສີມສຸຂະພາບ, ການຄວບຄຸມພະຍາດຕິດຕໍ່, ວຽກງານອາຫານ ແລະ ຢາ, ຜະລິດຕະພັນການແພດ ແລະ ເຄື່ອງສຳອາງ, ວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແລະ ວຽກງານການປະກັນສຸຂະພາບ, ຮັບປະກັນໃຫ້ພົນລະເມືອງລາວທົ່ວປວງຊົນ ເຂົ້າເຖິງການບໍລິການສາທາລະນະສຸກ ອັນຈຳເປັນພື້ນຖານທີ່ ມີຄຸນນະພາບ ແລະ ສົມເຫດສົມຜົນ;
6. ຄຸ້ມຄອງກວດກາສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເອກະຊົນ, ການຢັ້ງຢືນໃບປະກອບວິຊາຊີບ ໃຫ້ຜູ້ປະກອບວິຊາຊີບປິ່ນປົວ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສົ່ງເສີມທຸກຫົວໜ່ວຍການຈັດຕັ້ງຂອງລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ ການບໍລິການດ້ານອາຫານ, ຢາ, ເຄື່ອງສຳອາງ ແລະ ອຸປະກອນ-ຜະລິດຕະພັນການແພດ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
8. ກໍ່ສ້າງ, ບຳລຸງ ຊັບພະຍາກອນມະນຸດໃນຂະແໜງສາທາລະນະສຸກ, ພັດທະນາລະບົບພື້ນຖານໂຄງລ່າງກ່ຽວກັບການກໍ່ສ້າງຊັບພະຍາກອນມະນຸດຂອງຂະແໜງສາທາລະນະສຸກ; ຄຸ້ມຄອງມະຫາວິທະຍາໄລ, ບັນດາວິທະຍາໄລ ແລະ ສະຖາບັນການສຶກສາຕ່າງໆ ຂອງຂະແໜງສາທາລະນະສຸກ; ຄຸ້ມຄອງ, ຊີ້ນຳ ການສ້າງຫຼັກສູດ, ປຶ້ມຕຳລາ ສຳລັບການຮຽນ ແລະ ການສອນ ຂອງຂະແໜງສາທາລະນະສຸກ;
9. ຄຸ້ມຄອງ, ສຶກສາອົບຮົມ, ກໍ່ສ້າງ, ບຳລຸງສ້າງ, ສັບຊ້ອນ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ ຢ່າງຖືກຕ້ອງຕາມນະໂຍບາຍ ທີ່ພັກ ແລະ ລັດຖະບານ ໄດ້ປະກາດໃຊ້;
10. ຄົ້ນຄວ້າ ແລະ ປະກາດໃຊ້ລະບອບແບບແຜນວິທີເຮັດວຽກຂອງກະຊວງ, ລະບຽບການຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງຂະແໜງສາທາລະນະສຸກ;
11. ສ້າງ ແລະ ປັບປຸງ ຕາໜ່າງສາທາລະນະສຸກໃນຂອບເຂດທົ່ວປະເທດ, ຊີ້ນຳ ແລະ ຄຸ້ມຄອງ ຕາມສາຍຕັ້ງ ການປະຕິບັດວຽກງານ ແລະ ບຸກຄະລາກອນຂອງຂະແໜງສາທາລະນະສຸກ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;
12. ຊຸກຍູ້ ແລະ ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກໃຫ້ບັນດາອົງການຈັດຕັ້ງທີ່ຂຶ້ນກັບກະຊວງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາຫົວໜ່ວຍບໍລິຫານ ແລະ ບໍລິການດ້ານການແພດ, ການຢາ ທັງພາກລັດ ແລະ ເອກະຊົນ ໃຫ້ປະຕິບັດພາລະໜ້າທີ່ຂອງຕົນ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

13. ຕິດຕາມ ແລະ ກວດກາ ບັນດາອົງການຈັດຕັ້ງສາທາລະນະສຸກຢູ່ທຸກຂັ້ນ ກ່ຽວກັບປະສິດທິພາບຂອງການປະຕິບັດງານ, ໃນການຄຸ້ມຄອງງົບປະມານ, ການຄຸ້ມຄອງພື້ນຖານວັດຖຸເຕັກນິກ, ການນຳໃຊ້ແຮງງານ ແລະ ບັນຫາອື່ນໆ ບົນພື້ນຖານກົດໝາຍ, ລະບຽບການ ແລະ ກຳນົດໝາຍເສດຖະກິດເຕັກນິກ ທີ່ລັດຖະບານວາງອອກ;
14. ສະຫຼຸບ ສັງລວມ ສະພາບການຈັດຕັ້ງປະຕິບັດແຜນການ, ວຽກງານຂອງຂະແໜງການຕົນ ເພື່ອລາຍງານຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ;
15. ວິໄຈລະບົບສາທາລະນະສຸກ ໃຫ້ເຫັນຜົນກະທົບທາງດ້ານຕັ້ງໜ້າ ເພື່ອສົ່ງເສີມ ແລະ ດ້ານຫຍໍ້ທໍ້ເພື່ອດັດແປງແກ້ໄຂໃຫ້ທັນເວລາ, ສັງລວມຂໍ້ມູນສະຖິຕິ ດ້ານສາທາລະນະສຸກ ແລະ ການແພດເພື່ອປະກາດໃຊ້ເປັນທາງການ;
16. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ ແລະ ເຕັກນິກວິຊາການ ເພື່ອພັດທະນາວຽກງານສາທາລະນະສຸກ ບົນພື້ນຖານຫຼັກການ, ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ;
17. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດ ຂອງກະຊວງສາທາລະນະສຸກ ມີດັ່ງນີ້:

1. ສະເໜີລັດຖະບານພິຈາລະນາ ສ້າງ, ປັບປຸງ ຫຼື ຍຸບເລີກ ການຈັດຕັ້ງຂັ້ນຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງສາທາລະນະສຸກ;
2. ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານ-ລັດຖະກອນຂັ້ນຕ່າງໆ ຂອງຂະແໜງສາທາລະນະສຸກ ຕາມການແບ່ງຂັ້ນຄຸ້ມຄອງ;
3. ອະນຸມັດໃຫ້ສ້າງຕັ້ງ, ອອກທະບຽນໃບປະກອບວິຊາຊີບ ໃຫ້ບັນດາຫົວໜ່ວຍບໍລິການດ້ານການແພດ ແລະ ການຢາ ຂອງລວມໝູ່, ບຸກຄົນ ທັງຂອງລັດ ແລະ ເອກະຊົນ ຕາມກົດໝາຍ ແລະ ລະບຽບການທີ່ລັດຖະບານ ແລະ ກະຊວງສາທາລະນະສຸກ ວາງອອກ;
4. ກວດກາ ແລະ ກວດການວຽກງານຕ່າງໆ ທີ່ກຳນົດໄວ້ໃນພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ໃນຂະແໜງສາທາລະນະສຸກ ພ້ອມທັງແນະນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
6. ຮຽກໂຮມພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ນັກວິຊາການສາທາລະນະສຸກຂັ້ນຕ່າງໆ ມາເຂົ້າຮ່ວມປະຊຸມ ຫຼື ສ່ອງແສງວຽກງານ;
7. ອະນຸມັດໃຫ້ ຫ້ອງການ, ບັນດາກົມ, ສະຖາບັນ, ສູນວິຊາການຕ່າງໆ ແລະ ບັນດາການຈັດຕັ້ງທີ່ຂຶ້ນກັບກະຊວງສາທາລະນະສຸກ ຈັດຝຶກອົບຮົມ ຫຼື ສຳມະນາວິຊາການ ໃນແຕ່ລະໄລຍະ;
8. ສ້າງແຜນລາຍຮັບ ແລະ ລາຍຈ່າຍງົບປະມານການເງິນ ຂອງກະຊວງສາທາລະນະສຸກ ຕາມແຜນການທີ່ລັດຖະບານ ໄດ້ອະນຸມັດ;
9. ແຕ່ງຕັ້ງ ແລະ ຍຸບເລີກຄະນະກຳມະການ, ຄະນະຮັບຜິດຊອບໂຄງການຕ່າງໆ ເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ຕາມການມອບໝາຍຂອງລັດຖະບານ;
10. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກ ກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ບົນພື້ນຖານໄດ້ຮັບການອະນຸມັດ ຢ່າງເປັນທາງການ ຈາກລັດຖະບານ;
11. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

# ໝວດທີ 3
# ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກະຊວງສາທາລະນະສຸກ ປະກອບມີ:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມແຜນການ ແລະ ການເງິນ;
5. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ;
6. ກົມຄວບຄຸມພະຍາດຕິດຕໍ່;
7. ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ;
8. ກົມອາຫານ ແລະ ຢາ;
9. ຫ້ອງການປະກັນສຸຂະພາບ ແຫ່ງຊາດ.

ຫົວໜ່ວຍວິຊາການ ລະດັບ 01 ຂຶ້ນກັບກະຊວງ ປະກອບມີ:

1. ໂຮງໝໍມະໂຫສົດ;
2. ໂຮງໝໍມິດຕະພາບ;
3. ໂຮງໝໍເຊດຖາທິຣາດ;
4. ໂຮງໝໍເດັກ;
5. ໂຮງໝໍແມ່ ແລະ ເດັກເກີດໃໝ່;
6. ສະຖາບັນການແພດ ແລະ ການຢາພື້ນເມືອງ;
7. ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ;
8. ສະຖາບັນປັດສະເຕີລາວ;
9. ສູນການແພດຟື້ນຟູໜ້າທີ່ການ.

ຫົວໜ່ວຍວິຊາການ ລະດັບ 02 ຂຶ້ນກັບກະຊວງ ປະກອບມີ:

1. ສູນປິ່ນປົວ ແລະ ຮັກສາສຸຂະພາບຕາ;
2. ສູນຜິວໜັງ;
3. ສູນສຸຂະພາບແມ່ ແລະ ເດັກ;
4. ສູນນ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ;
5. ສູນສະໜອງຢາ ແລະ ອຸປະກອນການແພດ;
6. ສູນສະຖິຕິ ແລະ ຂ່າວສານ ສາທາລະນະສຸກ;
7. ສູນວິເຄາະ ແລະ ລະບາດວິທະຍາ;
8. ສູນວິໄຈອາຫານ ແລະ ຢາ;
9. ສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້;
10. ສູນຄວບຄຸມວັນນະໂລກ;
11. ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ;
12. ສູນໂພຊະນາການ;
13. ສູນຫົວໃຈ-ເສັ້ນເລືອດ;

14. ສູນມະເຮັງ;

15. ສູນຊຶມເຊື້ອລາວ-ຄຣິສຕົຟເມຣິເອີ;

16. ກອງກວດກາອາຫານ ແລະ ຢາ;

ນອກຈາກນັ້ນ ກະຊວງສາທາລະນະສຸກ ຍັງມີ ສະຖາບັນການສຶກສາ ສາທາລະນະສຸກ, ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ.

ກະຊວງສາທາລະນະສຸກ ມີກົງຈັກການຈັດຕັ້ງທາງດ້ານວິຊາການ ຂອງຕົນຢູ່ທ້ອງຖິ່ນ ຕາມເງື່ອນໄຂຕົວຈິງຢູ່ແຕ່ລະຂັ້ນຕາມການຕົກລົງ ຂອງອົງການປົກຄອງທ້ອງຖິ່ນ ໂດຍເອກະພາບກັບກະຊວງສາທາລະນະສຸກ ແລະ ກະຊວງພາຍໃນ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ.**

ບຸກຄະລາກອນ ຂອງກະຊວງສາທາລະນະສຸກ ປະກອບດ້ວຍ:

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານສາທາລະນະສຸກ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ; ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ ຮອງລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີ ກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີກະຊວງ; ຮອງລັດຖະມົນຕີເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າສູນ, ຮອງຫົວໜ້າສູນ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການຈຳນວນໜຶ່ງຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ກະຊວງສາທາລະນະສຸກ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງກະຊວງສາທາລະນະສຸກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງ ພະນັກງານ-ລັດຖະກອນ ທຸກລະດັບ; ນຳໃຊ້ຄວາມຮູ້ ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງສາທາລະນະສຸກ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານ ຂອງຂະແໜງສາທາລະນະສຸກ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດການລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ ແລະ ກາໝາຍ**

ກະຊວງສາທາລະນະສຸກ ມີງົບປະມານ, ຕາປະທັບ ແລະ ກາໝາຍເປັນຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ໂຮງໝໍ, ສູນ, ສະຖານການສຶກສາ ສາທາລະນະສຸກ, ຫົວໜ່ວຍວິສາຫະກິດ ແລະ ກົງຈັກການຈັດຕັ້ງຂອງທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ເໝາະສົມ ໃຫ້ອົງການປົກຄອງທ້ອງຖິ່ນ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງສາທາລະນະສຸກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 96/ນຍ, ລົງວັນທີ 09 ມີນາ 2017.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ



ພັນຄຳ ວິພາວັນ